ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0369 /ອຄ.ກຂອ
ນະຄອນຫຼວງວຽງຈັນ, ວັນທີ 26 FEB 2016

# ຂໍ້ຕົກລົງ
## ວ່າດ້ວຍການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011;
- ອີງຕາມ ດຳລັດ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ດຳເນີນການສົ່ງອອກສິນຄ້າທີ່ນຳໃຊ້ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ທີ່ໄດ້ຮັບສິດທິພິເສດ ແນໃສ່ການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ, ສອດຄ່ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ສາກົນ.

**ມາດຕາ 2 ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ຂຽນຫຍໍ້ເປັນພາສາອັງກິດວ່າ: e-CO ແມ່ນການດຳເນີນການແຈ້ງເອກະສານທາງເອເລັກໂຕຣນິກ ເພື່ອສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ໄດ້ຮັບສິດທິພິເສດ.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ທີ່ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກຢູ່ ສປປ ລາວ.

# ໝວດທີ II
# ເງື່ອນໄຂ ແລະ ຂັ້ນຕອນ
# ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ

**ມາດຕາ 4 ເງື່ອນໄຂຂອງຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ຜະລິດ ຫຼື ຜູ້ສົ່ງອອກສິນຄ້າ ທີ່ດຳເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
2. ມີປະຫວັດທີ່ດີໃນການປະຕິບັດຕາມລະບຽບການ ແລະ ຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.

**ມາດຕາ 5 ຂັ້ນຕອນຂອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ປະກອບເອກະສານຕາມທີ່ກຳນົດໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລ້ວສົ່ງໃຫ້ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ເພື່ອລົງທະບຽນຂໍສິດໃນການສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ;
2. ປະກອບເອກະສານຕາມທີ່ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ ແລ້ວສົ່ງໃຫ້ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ.

**ມາດຕາ 6 ການລົງທະບຽນ ເພື່ອຂໍສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກ ໂຕຣນິກ**

ການລົງທະບຽນ ເພື່ອຂໍສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ແມ່ນປະກອບເອກະສານສົ່ງໃຫ້ອົງການຄຸ້ມຄອງວຽກງານດັ່ງກ່າວ ທາງເອເລັກໂຕຣນິກ ໂດຍຜ່ານເວບໄຊ໌ www.ecolao.gov.la.

ເອກະສານທີ່ຕ້ອງປະກອບ ແລະ ສົ່ງໃຫ້ອົງການຄຸ້ມຄອງມີດັ່ງນີ້:

1. ຕື່ມຂໍ້ມູນໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມແບບຟອມທີ່ກຳນົດໄວ້ໃນລະບົບ e-CO;
2. ສຳເນົາເອກະສານເປັນໄຟລ໌ PDF ປະກອບມີ: ໃບທະບຽນວິສາຫະກິດ; ໃບຢັ້ງຢືນການມອບພັນທະອາກອນປະຈຳປີ; ໜັງສືແຈ້ງແບບຢ່າງລາຍເຊັນ ແລະ ກາປະທັບ; ແລະ ໃບແຈ້ງຂີດຄວາມສາມາດໃນການສົ່ງອອກປະຈຳປີ.

**ມາດຕາ 7 ວິທີການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ພາຍຫຼັງໄດ້ຮັບສິດເປັນຜູ້ມີເງື່ອນໄຂອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກແລ້ວ ຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ສາມາດປະກອບເອກະສານສົ່ງໃຫ້ອົງການຄຸ້ມຄອງວຽກງານດັ່ງກ່າວ ທາງເອເລັກໂຕຣນິກ ໂດຍຜ່ານເວັບໄຊ໌ www.ecolao.gov.la ເພື່ອສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າໃນການສົ່ງອອກສິນຄ້າແຕ່ລະຄັ້ງ ໂດຍມີເອກະສານ ດັ່ງນີ້:

1. ຕື່ມຂໍ້ມູນຕາມແບບຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທີ່ກຳນົດໄວ້ໃນລະບົບ e-CO;
2. ສຳເນົາເອກະສານເປັນໄຟລ໌ PDF ປະກອບມີ: ໃບຄຳຮ້ອງ; ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ສິນຄ້າ; ໃບແຈ້ງພາສີເປັນລາຍລະອຽດ; ແລະ ໃບຂົນສົ່ງ.

ພາຍຫຼັງໄດ້ຮັບແຈ້ງຕອບທາງເອເລັກໂຕຣນິກ ຢັ້ງຢືນຄວາມຖືກຕ້ອງຂອງເອກະສານ ຜູ້ສະເໜີອອກ e-CO ຕ້ອງພິມແບບຟອມໃບຢັ້ງຢືນແຫຼ່ງກຳເນີດສິນຄ້າອອກມາ ແລະ ລົງລາຍເຊັນພ້ອມປະທັບກາຂອງບໍລິສັດ/ໂຮງງານ ແລ້ວສົ່ງເອກະສານສະບັບຕົ້ນ ໃຫ້ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.

**ມາດຕາ 8 ການພິຈາລະນາອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ການພິຈາລະນາອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ມີຂັ້ນຕອນດັ່ງນີ້:

1. ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ຕ້ອງແຈ້ງຕອບ ແລະ ຢັ້ງຢືນຄວາມຖືກຕ້ອງຂອງບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ຜູ້ສະເໜີຮັບຮູ້ ເອກະສານ ທັນທີ ຫຼື ຊ້າສຸດບໍ່ໃຫ້ກາຍ 1 ວັນລັດຖະການ. ໃນກໍລະນີເອກະສານຂໍອອກ e-CO ບໍ່ຖືກຕ້ອງ ຫຼື ແລະ ແນະນຳໃຫ້ປັບປຸງເພື່ອໃຫ້ຖືກຕ້ອງ ແລະ ຄົບຖ້ວນ ແລ້ວສົ່ງຄືນໃຫ້ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ;
2. ພາຍຫຼັງໄດ້ຮັບເອກະສານສະບັບຕົ້ນທີ່ມີລາຍເຊັນ ແລະ ຕາປະທັບຂອງບໍລິສັດ/ໂຮງງານ ແລ້ວອົງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ຕ້ອງອອກໃບຢັ້ງຢືນແຫຼ່ງກຳເນີນສິນຄ້າ ໃຫ້ທັນທີ ຫຼື ຊ້າສຸດບໍ່ໃຫ້ກາຍ 1 ວັນລັດຖະການ.

## ໝວດທີ III
## ສິດ ແລະ ພັນທະຂອງຜູ້ສະເໜີ

**ມາດຕາ 9 ສິດຂອງຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ມີສິດ ດັ່ງນີ້:

1. ລົງທະບຽນເພື່ອຂໍສິດໃນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ;
2. ເລືອກໃຊ້ວິທີການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ ໃນຮູບແບບຜ່ານເອເລັກໂຕຣນິກ ຫຼື ບໍ່ຜ່ານເອເລັກໂຕຣນິກ;
3. ມີສິດອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 10 ພັນທະຂອງຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ມີພັນທະ ດັ່ງນີ້:

1. ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງ ແລະ ຊັດເຈນຂອງຂໍ້ມູນທາງເອເລັກໂຕຣນິກທີ່ໄດ້ເຊັນໃນເອກະສານ ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ;

2. ສຳເນົາເອກະສານການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກຄົບຊຸດຢ່າງໜ້ອຍ 03 ປີ ນັບແຕ່ມື້ອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ;
3. ສະໜອງຂໍ້ມູນໃຫ້ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ກໍລະນີອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກມີຄວາມຕ້ອງການ;
4. ເສຍຄ່າທຳນຽມ ແລະ ຄ່າບໍລິການຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
5. ປະຕິບັດພັນທະອື່ນຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ IV
## ຂໍ້ຫ້າມ

**ມາດຕາ 11 ຂໍ້ຫ້າມສຳລັບຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ຫ້າມຜູ້ສະເໜີອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ມີພຶດຕິກຳ ດັ່ງນີ້:

1. ປອມແປງເອກະສານ ຫຼື ແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;
2. ການລັກລອບເອົາສິນຄ້າທີ່ບໍ່ໄດ້ແຫຼ່ງກຳເນີດມາຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າ;
3. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 12 ຂໍ້ຫ້າມສຳລັບພະນັກງານອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ຫ້າມພະນັກງານອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງຖ່ວງດຶງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ, ພັກພວກ ແລະ ຍາດຕິພີ່ນ້ອງ;
2. ສົມຮູ້ຮ່ວມຄິດກັບຜູ້ຂໍຢັ້ງຢືນແຫຼ່ງກຳເນີດສິນຄ້າປອມແປງເອກະສານ;
3. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ V
## ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ

**ມາດຕາ 13 ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ**

ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ແມ່ນກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄຸ້ມຄອງວຽກງານດັ່ງກ່າວ.

ມາດຕາ 14 ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ

ອົງການຄຸ້ມຄອງການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າທາງເອເລັກໂຕຣນິກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄັດເລືອກບໍລິສັດທີ່ມີເງື່ອນໄຂ ແລະ ແນະນຳໃຫ້ລົງທະບຽນເພື່ອໄດ້ຮັບສິດໃນການສະເໜີອອກ e-CO;
2. ຄົ້ນຄວ້າ, ພິຈາລະນາ ອອກ, ໂຈະ ຫຼື ຖອນໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ;
3. ເປັນເຈົ້າການໃນການຈັດຝຶກອົບຮົມໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ກ່ຽວກັບ ວຽກງານການອອກ e-CO;
4. ສ້າງ ແລະ ຄຸ້ມຄອງລະບົບ e-CO, ລວບລວມຄຳຄິດເຫັນ ຈາກບັນດາພາກສ່ວນຕ່າງໆ, ບຸກຄົນ, ນິຕິບຸກຄົນ ເພື່ອແກ້ໄຂຂໍ້ຜິດພາດ (ຖ້າມີ) ເພື່ອຮັບປະກັນເວລາການຈັດຕັ້ງປະຕິບັດໃຫ້ເກີດປະສິດທິຜົນສູງສຸດ;
5. ຄົ້ນຫາບັນດາຈຸດທີ່ຍັງບໍ່ເໝາະສົມໃນຂອດການຈັດຕັ້ງປະຕິບັດ ເພື່ອຫາທາງແກ້ໄຂ, ປັບປຸງແກ້ໄຂໃຫ້ທັນຕໍ່ສະພາບການ;
6. ສະຫຼຸບ ແລະ ລາຍງານ ກ່ຽວກັບ ການອອກໃບ e-CO ໃຫ້ຄະນະນຳກະຊວງເປັນແຕ່ລະໄລຍະ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 15 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານອັນດີເດັ່ນໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 16 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຕໍ່ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຄື: ກ່າວເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ແຈ້ງລົບລ້າງໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ, ໃຫ້ໂຈະ ຫຼື ຢຸດຕິການເຄື່ອນໄຫວທຸລະກິດຂອງຜູ້ລະເມີດ, ປັບໄໝທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ.

# ໝວດທີ VII

## ບົດບັນຍັດສຸດທ້າຍ

**ມາດຕາ 17 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການນຳເຂົ້າ ແລະ ສົ່ງອອກ ເປັນເຈົ້າການ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ມີປະສິດທິຜົນສູງ.

**ມາດຕາ 18 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງ 15 ວັນ ທີ່ໄດ້ພິມລົງຈົດໝາຍທາງລັດຖະການ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ປ ເຂັມມະນີ ພົນເສນາ